<u>ເອກະສານຊ້ອນທ້າຍ</u>

# <u>ກົດລະບຽບ ຂອງ ສະຖາບັນ ປັດສະເຕີ ລາວ</u>

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ I: ຄຳນິຍາມ**

ບັນດາສັບ ທີ່ໃຊ້ໃນ ກົດລະບຽບ ສະບັບນີ້ ໄດ້ນິຍາມໄວ້ ດັ່ງຕໍ່ໄປນີ້:

- ສັນຍາຮ່ວມມືທົ່ວໄປ: ສັນຍາ ກ່ຽວກັບການສ້າງຕັ້ງ ສະຖາບັນ ປັດສະເຕີລາວ ທີ່ ເຊັນກັນ ລະຫວ່າງ ລັດຖະບານ ສປປ ລາວ ກັບ ສະຖາບັນ ປັດສະເຕີ ໃນວັນທີ 30 ພະ ຈິກ 2006;
- ຜູ້ບໍລິຫານ: ທຸກສະມາຊິກ ຂອງ ສະພາບໍລິຫານ ເຊິ່ງ ໄດ້ຮັບ ການແຕ່ງຕັ້ງ ຕາມ ມາດຕາ 9 ຂອງ ກົດລະບຽບ;
- ຂໍ້ຕົກລົງ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ: ຂໍ້ຕົກລົງ ຂອງ ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ເລກທີ062/ກຊສ ລົງວັນທີ 30/12/07;
- ງົບປະມານ: ສະພາບຄາດຄະເນ ລາຍຈ່າຍ ແລະ ລາຍຮັບ ປະຈຳປີ;
- ສະພາບໍລິຫານ: ຄະນະຊີ້ນຳ ຂອງ ສະຖາບັນ ປັດສະເຕີ ລາວ ຕາມຮູບແບບທີ່ໄດ້ ກຳນົດ ໄວ້ ໃນ ໝວດທີ III, ພາກທີ 2, 3 ແລະ 4 ຂອງ ກົດລະບຽບ ສະບັບນີ້;
- ຜູ້ບໍລິຈາກ: ບຸກຄົນ ຫລື ນິຕິບຸກຄົນ, ລວມທັງ ບັນດາສະຖາບັນສາກົນ, ບັນດາອົງການຈັດ ຕັ້ງ ບຸກຄົນ ທີ່ໄດ້ປະກອບສ່ວນສ້າງ ລາຍຮັບ ໃຫ້ແກ່ ສະຖາບັນ ປັດສະເຕີ ລາວ;
- ດຳລັດ ວ່າດ້ວຍ ການສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ: ດຳລັດ ຂອງ ນາຍົກລັດຖະມົນ ຕີ ເລກທີ 402/ນຍ ລົງວັນທີ 16 ພະຈິກ 2007 ວ່າດ້ວຍ ການສ້າງຕັ້ງ ສະຖາບັນ ປັດສະ ເຕີ ລາວ ໃນຖານະ ເປັນ ສະຖາບັນແຫ່ງຊາດ ຮັບຜິດຊອບ ໜ້າທີ່ ບໍລິການສາທາລະນະ;
- ລັດຖະບານ: ລັດຖະບານ ແຫ່ງ ສປປ ລາວ;
- ສະຖາບັນ ປັດສະເຕີ: ມູນນິທິ ເອກະຊົນ ຂຶ້ນທະບຽນ ຕາມກົດໝາຍ ຝຣັ່ງ ແລະ ມີສຳ ນັກງານ ຢູ່ທີ່ ປາຣີ;
- ກະຊວງ ສາທາລະນະສຸກ: ກະຊວງ ທີ່ມີໜ້າທີ່ຮັບຜິດຊອບ ວຽກງານ ສາທາລະນະສຸກ;
- ສູນ ວິເຄາະ ແລະ ລະບາດວິທະຍາ (ສວລ): ສູນວິເຄາະ ແລະ ລະບາດວິທະຍາແຫ່ງຊາດ ຂອງ ກະຊວງ ສາທາລະນະສຸກ;
- ຊື່ ປັດສະເຕີ: ບັນດາຊື່ "ສະຖາບັນ ປັດສະເຕີ", "ປັດສະເຕີ" ແລະ "ສະຖາບັນ ປັດສະເຕີ ລາວ" ດັ່ງດຽວກັບຄຳແປຕ່າງໆ ພ້ອມທັງເຄື່ອງໝາຍ ທີ່ໃຊ້ສະເພາະ ຫລື ໃຊ້ຮວມກັນ;
- OMS: ອົງການອະນາໄມໂລກ;

- ສປປ ລາວ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມເນື້ອໃນ ຂອງ ລັດຖະທຳມະນູນ ສະບັບ ລົງວັນທີ 14 ສິງຫາ 1991 ທີ່ຖືກປັບປຸງ ໃນວັນທີ 6 ພຶດສະພາ 2003;

**ມາດຕາ 2: ການກຳນົດ ຊື່ ແລະ ການໃຊ້ ຊື່ ປັດສະເຕີ**

1. ສະຖາບັນ ປັດສະເຕີ ລາວ ໃສ່ຊື່ "ສະຖາບັນ ປັດສະເຕີ ລາວ" ເປັນ ພາສາລາວ ແລະ "Institut Pasteur du Laos" ເປັນ ພາສາຝຣັ່ງ.
2. ຊື່ ປັດສະເຕີ ແມ່ນ ແລະ ຍັງແມ່ນກຳມະສິດເຕັມສ່ວນ ແລະ ຄົບຖ້ວນ ຂອງ ສະຖາບັນ ປັດສະເຕີ.
3. ສະຖາບັນ ປັດສະເຕີລາວ ນຳໃຊ້ຊື່ ປັດສະເຕີ ແບບບໍ່ຜູກຂາດ ບົນດິນແດນ ຂອງ ສປປ ລາວ ແລະ ເຄືອ ຂ່າຍ ອິນເຕີເນັດ ຂອງ ສະຖາບັນ ປັດສະເຕີລາວ ໂດຍເຄົາລົບ ຕໍ່ກົດບັດ ຂອງ ສະຖາບັນ ປັດສະເຕີ ເພື່ອຈຸດປະສົງພຽງອັນດຽວ ຄື ຕັ້ງຊື່ໃຫ້ ສະຖາບັນ ປັດສະ ເຕີ ລາວ. ຫາກສະຖາ ບັນ ປັດສະເຕີ ລາວ ມີຈຸດປະສົງນຳໃຊ້ໄປໃນທາງອື່ນນັ້ນ ຕ້ອງໄດ້ຮັບຄວາມເຫັນຊອບ ລ່ວງຫນ້າ ແລະ ເປັນລາຍລັກອັກສອນ ຈາກ ສະຖາບັນ ປັດສະເຕີ ເສຍກ່ອນ. ທຸກໆການ ໃສ່ຊື່ທີ່ຂື້ນກັບ ສະຖາບັນປັດສະເຕີ ຈະເປັນພາສາໃດກໍ່ຕາມຕ້ອງໄດ້ຄວາມເຫັນ ຊອບ ລ່ວງຫນ້າ ເປັນລາຍລັກອັກສອນ ຈາກ ສະຖາບັນ ປັດສະເຕີກ່ອນ.
4. ສະຖາບັນ ປັດສະເຕີ ລາວ ສາມາດຖືກຍົກເລີກສິດນຳໃຊ້ ຊື່ ປັດສະເຕີ ໂດຍສອດຄ່ອງກັບ ບັນດາຂໍ້ກຳນົດ ຂອງ ສັນຍາການຮ່ວມມືທົ່ວໄປ.

**ມາດຕາ 3: ວັດຖຸປະສົງ ຂອງ ສະຖາບັນ ປັດສະເຕີ ລາວ**

ວັດຖຸປະສົງ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນ ການຄົ້ນຄວ້າ ວິທະຍາສາດ ແລະ ການແພດ, ການເຄື່ອນໄຫວ ດ້ານສາທາລະນະສຸກ ແລະ ດ້ານການຝຶກອົບຮົມ ແລະ ທຸກການປະຕິບັດການ ທີ່ຕິດພັນ ທາງກົງ ຫຼື ທາງອ້ອມ ກັບ ການເຄື່ອນໄຫວ ທີ່ກ່າວມາ.

**ມາດຕາ 4: ທີ່ຕັ້ງສຳນັກງານ ຂອງ ສະຖາບັນ ປັດສະເຕີ ລາວ**

ທີ່ຕັ້ງສຳນັກງານ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນ ຖະໜົນ ສາມແສນໄທ, ບ້ານ ເກົ້າຍອດ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ, ສປປ ລາວ.

**ມາດຕາ 5: ພາລະໜ້າທີ່ ຂອງ ສະຖາບັນ ປັດສະເຕີ ລາວ**

1. ໜ້າທີ່ລວມ ຂອງ ສະຖາບັນ ປັດສະເຕີລາວ ໄດ້ກຳນົດແຈ້ງ ໃນຂອບເຂດ ຂອງແຜນ ການປັບປຸງວຽກງານ ສາທາລະນະສຸກ ສປປລາວ ດັ່ງທີ່ ກະຊວງ ສາທາລະນະສຸກ ໄດ້ວາງອອກແລ້ວ.
2. ໂດຍ ສອດຄ່ອງ ກັບ ຂໍ້ຕົກລົງ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ, ພາລະໜ້າທີ່ ຕໍ່ໄປນີ້ ໄດ້ຖືກມອບໝາຍ ໃຫ້ ສະຖາບັນ ປັດສະເຕີ ລາວ:

ກ. ຂະຫຍາຍ ແລະ ຄຸ້ມຄອງການຄົ້ນຄວ້າ ວິທະຍາສາດ ແລະ ການແພດ ໂດຍສະເພາະແມ່ນ ຈຸລະໂລກວິທະຍາ ໂດຍເອົາຈຸລະໂລກ ທີ່ເປັນສາເຫດ ຂອງ ພະຍາດທີ່ ເກີດຂຶ້ນໃໝ່ເປັນບຸລິມະສິດ ຈຸລະຊີວະວິທະຍາ, ການສຶກສາຄົ້ນຄວ້າ ພະຍາດທີ່ມີພາຫະນຳສິ່ງເຊື້ອ (maladies à vecteur) ເຊັ່ນ ພະຍາດໄຂ້ເລືອດອອກ ແລະ ພະຍາດສະໝອງອັກເສບ (l'encéphalite japonaise) ແລະ ການຄົ້ນ ຄວ້າ ພາກສະໜາມດ້ານລະບາດວິທະຍາ;

ຂ. ປະກອບສ່ວນເຂົ້າໃນການວາງນະໂຍບາຍ ດ້ານ ສາທາລະນະສຸກ ຂອງ ສປປ ລາວໂດຍສະເພາະສະໜອງການຊ່ວຍເຫລືອ ດ້ານເຕັກນິກ ອັນເປັນປະໂຫຍດທີ່ສຸດ ຕໍ່ ສູນ ວິເຄາະ ແລະ ລະບາດວິທະຍາ ແຫ່ງຊາດ ເທົ່າທີ່ເຮັດໄດ້ ໃນການສຳຫລວດ ການເກີດຂຶ້ນໃໝ່ ແລະ ລະບາດວິທະຍາ ພາກສະໜາມ;

ຄ. ພັດທະນາ ແລະ ຄຸ້ມຄອງ ການສຶກສາອົບຮົມ ໃນດ້ານວິທະຍາສາດ ແລະ ການແພດ ໂດຍສະເພາະ ແມ່ນການສຶກສາອົບຮົມຂັ້ນຕົ້ນ ແລະ ຕໍ່ເນື່ອງ ແລະ ເຂົ້າຮ່ວມ ການສຶກສາອົບຮົມຕ່າງໆໃນລະດັບສາກົນ, ໂດຍສະເພາະຢ່າງຍິ່ງ ແມ່ນຜ່ານ ເຄືອຂ່າຍສາກົນ ຂອງບັນດາ ສະຖາບັນ ປັດສະເຕີ.

3. ອີງໃສ່ພາລະບົດທີ່ໄດ້ຖືກມອບໝາຍ, ສະຖາບັນ ປັດສະເຕີ ລາວ ສາມາດ ຮັບເອົາເຊື້ອພະຍາດ ແລະ ຕົວຢ່າງຊີວະພາບອື່ນໆ ຈາກ ບັນດາສູນ ທີ່ຂຶ້ນກັບ ກະຊວງ ສາທາລະນະສຸກ ແຫ່ງ ສປປ ລາວ.

4. ເພື່ອເຮັດຫລ້ອນພາລະໜ້າທີ່ຂອງຕົນນັ້ນ, ສະຖາບັນ ປັດສະເຕີ ລາວ ຈະຕ້ອງໄດ້ຮ່ວມມືກັບ ບັນດາການຈັດຕັ້ງ ລາວ ແລະ ສາກົນ ໂດຍສະເພາະ ກັບ ສະຖາບັນ ປັດ ສະ ເຕີ.

## ໝວດທີ II

## ສິດ ແລະ ພັນທະ ຂອງ ສະຖາບັນ ປັດສະເຕີ ລາວ

### ມາດຕາ 6: ສິດ

ສະຖາບັນ ປັດສະເຕີລາວ ມີ ສິດ ດັ່ງຕໍ່ໄປນີ້:

ກ) ເຈລະຈາ, ຕົກລົງ ເຊັນອະນຸສັນຍາ ແລະ ສັນຍາກັບບັນດາບຸກຄົນ ທີ່ ຢູ່ ປະເທດລາວ ຫລື ຢູ່ໃນຂອບເຂດອຳນາດຕ່າງປະເທດ;

ຂ) ທຳການດຳເນີນ ຄະດີໃນສານ ໃນຖານະ ຂອງ ຕົນເອງ;

ຄ) ມີສິດໃຊ້ທີ່ດິນ ທີ່ ກະຊວງ ສາທາລະນະສຸກ ມອບໃຫ້ລ້າ, ດ້ວຍ ການ ຕົກລົງເຫັນດີ ຂອງ ອົງການ ທີ່ມີສິດອຳນາດ ດ້ານທີ່ດິນ, ຕາມ ມາດຕາ 27.2.ກ);

ງ) ເປັນ ເຈົ້າກຳມະສິດ ແລະ ສາມາດຂາຍ ອະສັງຫາລິມະຊັບ ໂດຍບໍ່ແມ່ນທີ່ດິນ ແລະ ສັງຫາລິມະຊັບ ຂອງຕົນ;

ຈ) ມີງົບປະມານ ແລະ ການເງິນ ເປັນຂອງຕົນເອງ;

ສ) ຮັບເອົາໂດຍກົງ ບັນດາຊັບພະຍາກອນ ເປັນຕົ້ນ ຈາກ ກະຊວງ ສາທາລະນະສຸກ, ຈາກ ສະຖາບັນ ປັດສະເຕີ, ຈາກ ປະຊາຄົມສາກົນ, ຈາກ ບຸກຄົນ, ຈາກ ສຳນັກງານອົງການຢູ່ປະເທດລາວ ຫລື ຈາກຜົນສຳເລັດ ທີ່ໄດ້ມາຈາກການຄົ້ນຄວ້າ ແລະ ການເຄື່ອນໄຫວຂອງຕົນ;

ຊ) ຈ່າຍ, ລົງທຶນ ແລະ ລົງທຶນຊ້ຳ ບັນດາຊັບພະຍາກອນທີ່ໄດ້ຮັບ ໂດຍສະເພາະຈາກການຈັດຕັ້ງກອງທຶນມອບຫມາຍ ຂອງ ສະຖາບັນ ປັດສະເຕີ ລາວ ໂດຍອີງໃສ່ຄວາມຈຳເປັນ ຢູ່ລາວ ຫລື ຢູ່ຕ່າງປະເທດ;

ຍ) ເປີດ ແລະ ຄຸ້ມຄອງບັນຊີທະນາຄານ ໃນບັນດາທະນາຄານ ທີ່ຈົດທະບຽນ ຢູ່ໃນ ສປປ ລາວ ແລະ/ຫລື ຢູ່ຕ່າງປະເທດ ເພື່ອການຮັບແລະການໃຊ້ຈ່າຍ ນັບທັງການໂອນເຂົ້າແລະອອກ ເປັນເງິນກີບ ແລະ ເງິນຕາຕ່າງປະເທດ.

ດ) ປະສານງານກັບເຈົ້າຫນ້າທີ່ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງໂດຍ ຜ່ານການປະຕິບັດໜ້າທີ່ທີ່ໄດ້ຮັບມອບຫມາຍຂອງຕົນ ເພື່ອ ຮັບປະກັນໃຫ້ໄດ້ຮັບຜົນສຳເລັດ;

ຕ) ໃຫ້ຄຳປຶກສາ ແກ່ລັດຖະບານ ສປປ ລາວ ກ່ຽວກັບບັນຫາ ໃນຂົງເຂດຄວາມຮັບຜິດຊອບ ທີ່ຖືກມອບໝາຍ ຕາມ ດຳລັດ ວ່າດ້ວຍ ການສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ; ແລະ

ຖ) ຮັບຮອງເອົາທຸກກິດຈະການ ແລະ ມາດຕະການທີ່ຈຳເປັນໃນການດຳເນີນງານ ທີ່ໄດ້ຮັບມອບຫມາຍ ຕາມ ຂໍ້ຕົກລົງ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ ແລະ ຖືກຮັບຮອງໂດຍ ສະພາບໍລິຫານ.

**ມາດຕາ 7: ພັນທະ**

ສະຖາບັນ ປັດສະເຕີ ລາວ ຕ້ອງ:

ກ) ແຈກຢາຍຊັບພະຍາກອນ ທີ່ໄດ້ຮັບເຂົ້າໃນການດຳເນີນ ກິດຈະການ;

ຂ) ປຶກສາຫາລື ກັບ ບັນດາເຈົ້າຫນ້າທີ່ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອດຳເນີນແຜນງານໃດຫນຶ່ງ, ກິດຈະການ ຫລື ມາດຕະການ ສະເພາະໃດຫນຶ່ງ, ໃນ ຂອບເຂດ ພາລະບົດບາດ ຂອງ ຕົນ;

ຄ) ລາຍງານ ປະຈຳປີ ກ່ຽວກັບການເຄື່ອນໄຫວ ຂອງ ສະຖາບັນ ປັດສະເຕີ ລາວ ໃຫ້ແກ່ ບັນດາຜູ້ບໍລິຈາກ;

ງ) ສົ່ງຂໍ້ມູນກ່ຽວກັບເຊື້ອ ໄຂ້ຫວັດ ແລະ ໄຂ້ຫວັດສັດປີກ ທີ່ພົບເຫັນ ທີ່ເປັນ ຜົນປະໂຫຍດດ້ານສາທາລະນະສຸກ ໃຫ້ພາກສ່ວນ ດັ່ງຕໍ່ໄປນີ້:

(I) ສົ່ງໃຫ້ ສູນວິເຄາະ ແລະ ລະບາດວິທະຍາ ແຫ່ງຊາດ ຂອງ ກະຊວງ ສາທາລະນະສຸກ ທີ່ມີຫນ້າທີ່ໃນການສົ່ງຂໍ້ມູນ ຂ່າວສານທີ່ຈຳເປັນ ໃຫ້ແກ່

ເຄືອຂ່າຍໄຂ້ຫວັດ ຂອງອົງການອະນາໄມໂລກ ຕາມລະບຽບການ ທີ່ມີຜົນບັງຄັບໃຊ້ ເຊິ່ງອົງການສາກົນດັ່ງກ່າວ ໄດ້ວາງອອກ ແລະ ໂດຍເຄົາລົບ ຕໍ່ ກົດລະບຽບສາກົນດ້ານ ສາທາລະນະສຸກ;

(ii) ສົ່ງໃຫ້ ບັນດາອົງການຈັດຕັ້ງສາກົນ ທີ່ມ ສິດອຳນາດ ຕາມຄຳສັ່ງ ຂອງກະຊວງ ສາທາລະນະສຸກ; ແລະ

(iii) ສົ່ງໃຫ້ ສູນ ອົງການອະນາໄມໂລກ ກ່ຽວກັບ ໄຂ້ຫວັດ ຂອງ ສະຖາບັນປັດສະເຕີ.

ຈ) ເຄົາລົບ:

- ຕໍ່ "ກົດບັດກ່ຽວກັບປັດຊະຍາ ປັດສະເຕີ" ແລະ "ຖະແຫລງການ ວ່າດ້ວຍ ປັດຊະຍາ ປັດສະເຕີ ທີ່ມີສ່ວນຮ່ວມ" ທີ່ໝາຍເຖິງ ການກະທຳ ແລະ ຈັນຍາທຳເຊິ່ງ ພົວພັນຢ່າງຄົບຖ້ວນກ່ຽວກັບຄວາມຕ້ອງການ ດ້ານ ສາທາລະນະສຸກ ທີ່ລະບຸໄວ້ໃນສັນຍາ ການຮ່ວມມືທົ່ວໄປ, ແລະ
- ບັນດາຫລັກການຈັນຍາທຳສາກົນ ແລະ ໂດຍ ສະເພາະແມ່ນ ກົດນູແຣມເບີ (Code de Nuremberg 1947), ຖະແຫລງການສາກົນ ວ່າດ້ວຍ ສິດທິມະນຸດ (Déclaration Universelle des Droits de l'Homme 1948), ຖະແຫລງການ ມະນີລາ (Déclaration de Manille 1981) ແລະ ຖະແຫລງການ ເຮນຊິນກີ (Déclaration d'Helsinki) (ສະບັບປັບປຸງໃໝ່ໃນປີ 2000).

ສ) ດຳເນີນ ການເຄື່ອນໄຫວວຽກງານ ຂອງ ຕົນ ເພື່ອຈຸດປະສົງວິທະຍາສາດ ແບບສັນຕິ.

## ໝວດທີ III
## ການຈັດຕັ້ງ ຂອງ ສະຖາບັນ ປັດສະເຕີລາວ

### ພາກທີ I. ໂຄງຮ່າງການຈັດຕັ້ງທົ່ວໄປ

### ມາດຕາ 8: ອົງປະກອບການຈັດຕັ້ງ

ສະຖາບັນ ປັດສະເຕີລາວ ມີ ຄະນະຊີ້ນຳ ດັ່ງນີ້:

- ສະພາບໍລິຫານ ມີໜ້າທີ່ຊີ້ນຳ ແລະ ຄຸ້ມຄອງທົ່ວໄປ ໃນ ສະຖາບັນ ປັດສະເຕີລາວ; ແລະ
- ຜູ້ອຳນວຍການໃຫຍ່ ເຊິ່ງ ມີໜ້າທີ່ຈັດຕັ້ງປະຕິບັດ ມະຕິຕົກລົງ ຂອງ ສະພາບໍລິຫານ ລວມທັງ ການຄຸ້ມຄອງປະຈຳວັນ ຂອງ ສະຖາບັນ ປັດສະເຕີ ລາວ.

ນອກຈາກນີ້, ສະພາວິທະຍາສາດ ຮັບຜິດຊອບ ດຳເນີນການຕິດຕາມ ແລະ ປະເມີນຜົນ ບັນດາໂຄງການ ແລະ ການ ເຄື່ອນໄຫວຕ່າງໆ ທາງດ້ານວິທະຍາສາດ.

## ພາກທີ 2. ອົງປະກອບ ຂອງ ສະພາບໍລິຫານ

### ມາດຕາ 9: ການແຕ່ງຕັ້ງຜູ້ບໍລິຫານ

1. ສະພາບໍລິຫານ ຂອງ ສະຖາບັນ ປັດສະເຕີ ລາວ ປະກອບດ້ວຍ ຜູ້ບໍລິຫານ ຫ້າ (5) ທ່ານ ໂດຍ ມີ ໜຶ່ງ (1) ທ່ານ ເປັນ ປະທານ ແລະ ອີກ ໜຶ່ງ (1) ທ່ານ ເປັນເລຂາ. ໃນ ຈຳນວນ 5 ທ່ານ ທີ່ກ່າວມາ, ສາມ (3) ທ່ານ ຈະຖືກແຕ່ງຕັ້ງ ໂດຍ ກະຊວງ ສາທາລະນະສຸກ ແລະ ອີກ ສອງ (2) ທ່ານ ຈະຖືກແຕ່ງຕັ້ງ ໂດຍສະຖາບັນ ປັດສະເຕີ.
2. ອາຍຸການ ຂອງ ບັນດາຜູ້ບໍລິຫານ, ຍົກເວັ້ນ ປະທານສະພາ ບໍລິຫານ, ແມ່ນ ສີ່ (4) ປີ ແລະ ສາມາດຕໍ່ໄດ້ອີກ ພາຍໃນເງື່ອນໄຂ ເຄົາລົບນັບຖືວິທີການ ແຕ່ງຕັ້ງ ໃນເບື້ອງຕົ້ນ.
5. ກະຊວງ ສາທາລະນະສຸກ ແລະ ສະຖາບັນ ປັດສະເຕີ ຕ້ອງແຈ້ງໃຫ້ກັນຮູ້ເຖິງ ການແຕ່ງຕັ້ງ ຫລື ປົດຕຳແໜ່ງ ບັນດາຜູ້ບໍລິຫານ ທີ່ຂຶ້ນກັບຕົນ. ໃນກໍລະນີທີ່ ມີ ການແຕ່ງຕັ້ງໃດໜຶ່ງນັ້ນ, ແຈ້ງການສະບັບດັ່ງກ່າວ ຕ້ອງລະບຸ ຊື່ ແລະ ປະຫວັດ ຂອງ ຜູ້ບໍລິຫານ ທີ່ກ່ຽວຂ້ອງ.

### ມາດຕາ 10: ປະທານສະພາບໍລິຫານ

1. ປະທານ ສະພາບໍລິຫານ ແມ່ນ ຕົວແທນທາງກົດໝາຍ ຂອງ ສະຖາບັນ ປັດສະເຕີ ລາວ.
2. ໂດຍອີງຕາມ ຂໍ້ຕົກລົງ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ, ປະທານ ສະພາບໍລິຫານ ແມ່ນ ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ຂອງ ສປປ ລາວ ໂດຍຕຳແໜ່ງ.
3. ປະທານສະພາບໍລິຫານ ສາມາດມອບສິດ ແລະ ໜ້າທີ່ ໂດຍສະເພາະ ສິດເປັນຕົວແທນ ຂອງ ສະຖາບັນ ປັດສະເຕີ ລາວ ໃຫ້ແກ່ ຜູ້ອຳນວຍການໃຫ່ຍ.

### ມາດຕາ 11: ການແທນຕົວ

ໃນກໍລະນີ ເສັຍຊີວິດ ຫລື ຕຳແໜ່ງ ຂອງຜູ້ບໍລິຫານໃດໜຶ່ງຫ່ວາງນັ້ນ, ຜູ້ບໍລິຫານຜູ້ໃໝ່ ຈະຖືກແຕ່ງຕັ້ງເຂົ້າຮັບໜ້າທີ່ແທນ ໂດຍ ກະຊວງສາທາລະນະສຸກ ຫລື ໂດຍ ສະຖາບັນ ປັດສະເຕີ ຕາມສາຍການຈັດຕັ້ງເພື່ອປະຕິບັດຮັບໜ້າທີ່ ຕາມອາຍຸການທີ່ຍັງເຫລືອ.

## ພາກທີ 3. ກອງປະຊຸມ ສະພາບໍລິຫານ

### ມາດຕາ 12: ລະບຽບການຈັດຕັ້ງກອງປະຊຸມ ສະພາບໍລິຫານ

1. ກອງປະຊຸມ ຂອງ ສະພາບໍລິຫານ ຈະຖືກຮຽກ ແລະ ເປັນປະທານ ໂດຍ ປະທານ ສະພາບໍລິຫານ.

2. ໝາຍເຊີນຮຽກປະຊຸມສະພາບໍລິຫານ ສາມາດສົ່ງໄປດ້ວຍທຸກວິທີທາງ ໂດຍການລົງທະບຽນ ແລະ ໂດຍມີໃບແຈ້ງຮັບໜຶ່ງ (1) ເດືອນ ກ່ອນວັນເປີດກອງປະຊຸມ. ຈົດໝາຍເຊີນປະຊຸມຕ້ອງແຈ້ງໃຫ້ຮູ້ເຖິງວັນທີ, ເວລາ ແລະ ສະຖານທີ່ປະຊຸມ ພ້ອມທັງບອກໃຫ້ຮູ້ ລາຍການປະຊຸມ. ບັນດາເອກະສານກ່ຽວກັບການຕັດສິນ ຊີ້ຂາດ ເປັນລາຍລັກອັກສອນ ຕ້ອງຄັດຕິດມານຳລາຍການປະຊຸມ.
3. ກອງປະຊຸມ ສະພາບໍລິຫານ ຈະຈັດຂຶ້ນ ທີ່ ສຳນັກງານ ຂອງ ສະຖາບັນ ປັດສະເຕີ ລາວ ຫຼື ສະຖານທີ່ອື່ນ ໃດໜຶ່ງ ທີ່ ລະບຸ ໂດຍ ປະທານ.
4. ກອງປະຊຸມ ສະພາບໍລິຫານ ສາມາດເປີດຂຶ້ນໄດ້ ໂດຍໃຊ້ ລະບົບປະຊຸມຜ່ານວິດີໂອ.
5. ໃນກໍລະນີ ຜູ້ບໍລິຫານໃດໜຶ່ງ ບໍ່ສາມາດເຂົ້າຮ່ວມກອງປະຊຸມສະພາ ບໍລິຫານໄດ້, ຜູ້ກ່ຽວສາມາດເຮັດໃບມອບທະສິດ ໃຫ້ແກ່ບຸກຄົນທີ່ຕົນເລືອກເອົາ ສົ່ງທາງເມໄປສະນີ ຫລື ເອເລັກໂທນິກ ຫລື ທາງໂທລະພິມ ເພື່ອເຂົ້າປະຊຸມແທນ.
6. ລາຍຈ່າຍ ຂອງບັນດາຜູ້ບໍລິຫານ ທີ່ເນື່ອງ ມາຈາກ [ໂດຍ ມີການຢັ້ງຢືນ] ການເຂົ້າຮ່ວມກອງປະຊຸມນັ້ນ ຈະໄດ້ຮັບ ການທົດແທນຄືນ ໂດຍ ສະຖາບັນ ປັດສະເຕີ ລາວ.

### ມາດຕາ 13: ກອງປະຊຸມ ປະຈຳປີ

1. ສະພາບໍລິຫານ ເປີດປະຊຸມຢ່າງໜ້ອຍ ໜຶ່ງ (1) ເທື່ອຕໍ່ປີ.
2. ປະຊຸມ ປະຈຳປີ ຕ້ອງມີລາຍການ ເຊັ່ນ:
    - ສະເໜີລາຍງານການເຄື່ອນໄຫວປະຈຳປີ ຂອງ ສະຖາບັນ ປັດສະເຕີ ລາວ ລວມທັງລາຍງານ ຂອງ ຜູ້ກວດສອບບັນຊີ ຈາກພາຍນອກ;
    - ສະເໜີລາຍງານການເງິນ ຂອງປີຜ່ານມາ;
    - ຮັບຮອງເອົາລາຍຮັບ ແລະ ລາຍຈ່າຍ ທີ່ຄາດຄະເນໄວ້ໃນປີຕໍ່ໜ້າ; ແລະ
    - ທຸກໆບັນຫາ ທີ່ເອົາເຂົ້າໃນວາລະປະຊຸມ ກ່ອນເລີ່ມເປີດກອງປະຊຸມ.

### ມາດຕາ 14: ກອງປະຊຸມສະໄໝ ວິສາມັນ

1. ສະພາບໍລິຫານ ສາມາດເປີດປະຊຸມສະໄໝວິສາມັນ ໄດ້ຕາມຄຳຮ້ອງຂໍ ຂອງ ປະທານສະພາບໍລິຫານ ຫລື ຕາມ ຄຳຂໍຮ້ອງເປັນລາຍລັກອັກສອນ ຂອງ ໜຶ່ງສ່ວນສາມ (1/3) ຂອງ ຈຳນວນຜູ້ບໍລິຫານທັງໝົດ.
2. ໃນກໍລະນີ ປະທານ ສະພາບໍລິຫານ ຫາກບໍ່ຮຽກປະຊຸມ ພາຍໃນໜຶ່ງ ເດືອນ ຫລັງຈາກໄດ້ຮັບຄຳຮ້ອງຂໍ ຂອງໜຶ່ງສ່ວນສາມ (1/3) ຂອງຜູ້ບໍລິຫານ ທັງໝົດ ໃຫ້ເປີດປະຊຸມນັ້ນ, ກອງປະຊຸມກໍ່ສາມາດ ເປີດຂຶ້ນໄດ້ ໂດຍບັນດາຜູ້ບໍລິຫານ ເອງ.

### ມາດຕາ 15: ຈຳນວນສະມາຊິກ ທີ່ຈຳເປັນເພື່ອເປີດກອງປະຊຸມ

1. ສະພາບໍລິຫານ ຈະເປີດປະຊຸມໄດ້ນັ້ນ ຕ້ອງມີ ບັນດາຜູ້ບໍລິຫານ ຫລື ຕົວແທນຜູ້ບໍລິຫານ ຈຳນວນເກີນສອງສ່ວນສາມ (2/3) ເຂົ້າຮ່ວມ ໃນນັ້ນຢ່າງໜ້ອຍ ໜຶ່ງທ່ານມາຈາກ ກະຊວງ ສາທາລະນະສຸກ ແລະ ໜຶ່ງທ່ານ ມາຈາກ ສະຖາບັນປັດສະເຕີ.
2. ຖ້າຈຳນວນຜູ້ເຂົ້າຮ່ວມປະຊຸມບໍ່ຄົບ ປະທານສະພາບໍລິຫານ ສາມາດ ຮຽກປະຊຸມໃໝ່ ຕາມ ລາຍການອັນເກົ່າ, ພາຍໃນສາມສິບ (30) ວັນ.

### ມາດຕາ 16: ການເຂົ້າຮ່ວມປະຊຸມ ຂອງ ບຸກຄົນພາຍນອກ

ອີງຕາມຫົວຄິດລິເລີ່ມຂອງຕົນ ຫລື ຕາມຄຳຮ້ອງຂໍ ຂອງ ຜູ້ບໍລິຫານ ໜຶ່ງ ຫລື ຫລາຍທ່ານ, ເວັ້ນເສຍ ແຕ່ຄຳເຫັນກົງກັນຂ້າມຂອງ ສະພາບໍລິຫານ, ປະທານສາມາດເຊື້ອເຊີນ ບຸກຄົນຕ່າງໆ ເຂົ້າຮ່ວມປະຊຸມສະພາບໍລິຫານໄດ້ ເຊັ່ນ:

- ທ່ານຜູ້ອຳນວຍການໃຫຍ່ ຫລື ບຸກຄົນອື່ນໆເຊິ່ງປະທານເຫັນວ່າການເຂົ້າຮ່ວມຂອງເຂົາເຈົ້າ ນັ້ນ ເປັນຜົນປະໂຫຍດ ໃນການໃຫ້ຄວາມຄິດເຫັນ;
- ຜູ້ຊົງຄຸນວຸດທິ ໜຶ່ງ ຫລື ຫລາຍທ່ານ ໃນບັນດາຜູ້ບໍລິຈາກ ຫລື ບັນດາ ສະຖາບັນ ສາກົນທີ່ສຳຄັນເພື່ອເຂົ້າຮ່ວມ ໃນຖານະເປັນຜູ້ສັງເກດການ.

### ມາດຕາ 17: ມະຕິຕົກລົງ ຂອງ ສະພາບໍລິຫານ

ສະພາບໍລິຫານ ຕັດສິນບັນຫາສຳຄັນຂອງ ສະຖາບັນ ປັດສະເຕີລາວ ໃນຂອບເຂດ ຄວາມຮັບຜິດຊອບທີ່ກຳນົດໄວ້ ໂດຍສອດຄ່ອງກັບມາດຕາ 20 ຂອງ ກົດລະບຽບ ສະບັບ ນີ້. ທຸກມະຕິຕົກລົງຕ້ອງໄດ້ຮັບສຽງສ່ວນຫລາຍ ຈາກ ບັນດາຜູ້ບໍລິຫານ ຫລື ຜູ້ຕາງໜ້າ ເຂົ້າຮ່ວມປະຊຸມ ໂດຍ ໄດ້ຮັບ ການລົງຄະແນນສຽງເຫັນດີ ຢ່າງໜ້ອຍ ຈາກ ໜຶ່ງ ທ່ານ ໃນບັນດາຜູ້ບໍລິຫານທີ່ຖືກແຕ່ງຕັ້ງ ຈາກ ກະຊວງ ສາທາລະນະສຸກ ແລະ ໜຶ່ງ ທ່ານ ຈາກ ສະຖາບັນ ປັດສະເຕີ.

### ມາດຕາ 18: ເລຂານຸການ

ເລຂານຸການ ຂອງ ສະພາບໍລິຫານ ແມ່ນ ແຕ່ງຕັ້ງໂດຍສະພາບໍລິຫານ ໂດຍ ເລືອກເອົາ ໃນຖັນແຖວ ບັນດາຜູ້ບໍລິຫານ.

### ມາດຕາ 19: ລາຍງານການປະຊຸມ

ເລຂານຸການສະພາບໍລິຫານ ເຮັດລາຍງານການປະຊຸມ ແລ້ວສົ່ງສຳເນົາໃຫ້ແກ່ ຜູ້ບໍລິຫານ ແຕ່ລະທ່ານ ໜຶ່ງສະບັບ. ລາຍງານການປະຊຸມ ຕ້ອງບອກຊື່ຜູ້ເຂົ້າຮ່ວມປະຊຸມ ຫລື ຜູ້ຕາງ ໜ້າ, ບັນຫາທີ່ສົນທະນາກັນ ແລະ ມະຕິຕົກລົງ ທີ່ຮັບຮອງເອົາ, ແລະ ຕ້ອງໃຫ້ ປະທານ ສະພາ ບໍລິຫານ ລົງລາຍເຊັນ.

## ພາກທີ 4. ສິດ ແລະ ໜ້າທີ່ ຂອງ ສະພາບໍລິຫານ

**ມາດຕາ 20: ສິດ ແລະ ໜ້າທີ່**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

ກ) ແຕ່ງຕັ້ງ ແລະ ປົດຕຳແໜ່ງຜູ້ອຳນວຍການໃຫ່ຍ ແລະ ມອບສິດໃຫ້ ຜູ້ອຳນວຍການໃຫ່ຍ ຫລື ຜູ້ບໍລິຫານຄົນອື່ນ;

ຂ) ແຕ່ງຕັ້ງ ບັນດາສະມາຊິກສະພາວິທະຍາສາດ;

ຄ) ເລືອກເຟັ້ນ ແລະ ຮັບຮອງເອົາ ແຜນງານວິທະຍາສາດ ຕາມ ຄຳສະເໜີ ຂອງ ສະພາວິທະຍາສາດ;

ງ) ອະນຸມັດ ແຜນການຍຸດທະສາດ ແລະ ຮັບຮອງເອົາ ງົບປະມານປະຈຳປີ;

ຈ) ຫາໄດ້ມາ ແລະ ຂາຍຊັບສິນ, ສິ່ງປຸກສ້າງ ແລະ ເຄື່ອງປະກອບສຳລັບມູນຄ່າທີ່ສູງກວ່າ 50,000 ເອີໂຣ (ຫ້າສິບພັນ ເອີໂຣ);

ສ) ຍົກຍ້າຍສຳນັກງານ ຂອງ ສະຖາບັນ ປັດສະເຕີ ລາວ ຫລື ຕໍ່ ອາຄານ;

ຊ) ເຊັນກູ້ຢືມເງິນ ຈຳນວນຫລາຍກວ່າ 50,000 ເອີໂຣ (ຫ້າສິບ ເອີໂຣ);

ຍ) ແຕ່ງຕັ້ງຜູ້ກວດສອບບັນຊີ ຈາກພາຍນອກ ແລະ ຖ້າມີຄວາມຈຳເປັນ ແຕ່ງຕັ້ງຜູ້ກວດກາການເງິນໜຶ່ງທ່ານ;

ດ) ຮັບຮອງເອົາລະບຽບການພາຍໃນຂອງ ສະຖາບັນ ປັດສະເຕີ ລາວ;

ຕ) ສະເໜີຕໍ່ລັດຖະບານແກ້ໄຂ ກົດລະບຽບຂອງ ສະຖາບັນ ປັດສະເຕີ ລາວ;

ຖ) ເລືອກຕັ້ງ ຫລື ປົດຕຳແໜ່ງ ເລຂານຸການສະພາບໍລິຫານ ຂອງ ສະຖາບັນ ປັດສະເຕີ ລາວ;

ທ) ຂໍຮ້ອງການອຸບປະຖຳ ແລະຮັບຮອງເອົາບັນດາຂໍ້ຕົກລົງອຸດໜູນດ້ານການເງິນ;

ນ) ສະເໜີ ຕໍ່ ລັດຖະບານ ເອົາການເຄື່ອນໄຫວຂອງ ສະຖາບັນ ປັດສະເຕີ ລາວ ເຂົ້າຮ່ວມກັບພາກສ່ວນອື່ນ ຫລື ສະເໜີ ຍຸບ ສະຖາບັນ ປັດສະເຕີ ລາວ.

## ພາກທີ 5. ຜູ້ອຳນວຍການໃຫຍ່

**ມາດຕາ 21: ວາລະດຳລົງຕຳແໜ່ງ ຂອງ ຜູ້ອຳນວຍການໃຫ່ຍ**

1. ຜູ້ອຳນວຍການໃຫ່ຍ ຂອງ ສະຖາບັນ ປັດສະເຕີ ລາວ ຖືກແຕ່ງຕັ້ງ ໂດຍ ສະພາບໍລິຫານ. ອາຍຸ ການແມ່ນ ສີ່ (4) ປີ, ສາມາດຕໍ່ໄດ້ຕາມມະຕິຕົກລົງ ຂອງ ສະພາບໍລິຫານ. ຜູ້ອຳນວຍການໃຫ່ຍ ຖືກຄັດເລືອກເອົາໃນບັນດາຜູ້ສະໝັກ ທີ່ມີຄວາມຊຳນານ ດ້ານວິທະຍາສາດ ດ້ານ ການຄຸ້ມຄອງ ແລະ ມີ ປະສົບການ ໃນ ໂຄງການວິທະຍາສາດ ທີ່ດຳເນີນງານໂດຍ ເຄືອຂ່າຍສາກົນ ຂອງ ສະຖາບັນ ປັດສະເຕີ.
2. ຢ່າງໜ້ອຍສີ່ສະໄໝທຳອິດ, ນັບແຕ່ມື້ສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ, ຜູ້ອຳນວຍການໃຫ່ຍ ແມ່ນ ດຳລົງຕຳແໜ່ງ ໂດຍ ຜູ້ອຳນວຍການໃຫ່ຍ ທີ່ ສະຖາບັນປັດສະເຕີ ຄັດ

ເລືອກເອົາ ໂດຍຄວາມເຫັນພ້ອມຂອງ ສະພາບໍລິຫານ ຂອງ ສະຖາບັນ ປັດສະເຕີ ລາວ. ຫລັງຈາກສິ້ນອາຍຸການສະໄຫມທີ່ສີ່ແລ້ວ, ສະພາບໍລິຫານຈະ ຕົກລົງ ວ່າ ຈະໃຫ້ ຜູ້ອຳນວຍການໃຫ່ຍ ທີ່ເລືອກໂດຍ ສະຖາບັນ ປັດສະເຕີ ດຳລົງຕຳແໜ່ງ ຫຼືບໍ່ ແລະ ຕື່ມ ຈັກສະໄໝ.

### ມາດຕາ 22: ສິດ ແລະໜ້າທີ່ ຂອງ ຜູ້ອຳນວຍການໃຫ່ຍ

ຜູ້ອຳນວຍການໃຫ່ຍ ຕ້ອງຕິດຕາມການປະຕິບັດ ມະຕິຕົກລົງ ທີ່ຮັບຮອງເອົາ ໂດຍສະພາບໍລິຫານ ແລະ ຮັບປະກັນ ການຊີ້ນຳນຳພາຂອງ ສະຖາບັນ ປັດສະເຕີ ລາວ ເພື່ອ:

ກ) ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ ໃຫ້ສອດຄ່ອງ ກັບນະໂຍບາຍ ທີ່ ສະພາບໍລິຫານ ກຳນົດໄວ້;

ຂ) ກຳນົດເປົ້າຫມາຍ ວິທະຍາສາດ ແລະ ແຜນການຄົ້ນຄ້ວາ ໂດຍອີງໃສ່ການສະຫນັບສະຫນູນຂອງ ສະພາວິທະຍາສາດ ແລະ ຄຸ້ມຄອງການຄົ້ນຄ້ວາ, ການພັດທະນາ ແລະ ການເຄື່ອນໄຫວດ້ານສາທາລະນະສຸກ ແລະ ການສິດສອນຂອງ ສະຖາບັນ ປັດສະເຕີລາວ;

ຄ) ຮ່າງງົບປະມານປະຈຳປີຂອງ ສະຖາບັນ ປັດສະເຕີລາວເພື່ອສະເຫນີຜ່ານສະພາບໍລິຫານ ແລະ ສະເຫນີລາຍງານການເງິນ;

ງ) ນຳພາພະນັກງານ ແລະ ແຕ່ງຕັ້ງ, ປົດ ຫລື ໃຫ້ລາຈາກຫນ້າທີ່ ບັນດາພະນັກງານວິທະຍາສາດ, ບໍລິຫານ ແລະ ການເງິນ;

ຈ) ລາຍງານການເຄື່ອນໄຫວປະຈຳປີ ໂດຍສະເພາະແຈ້ງລາຍລະອຽດ ກ່ຽວກັບການເຄື່ອນໄຫວວິທະຍາສາດ ປະຈຳປີ ຂອງ ສະຖາບັນ ປັດສະເຕີ ລາວ ແລ້ວສະເຫນີຜ່ານສະພາບໍລິຫານ;

ສ) ສະເຫນີຕໍ່ສະພາບໍລິຫານ ກ່ຽວກັບນະໂຍບາຍ ກຳນົດມູນຄ່າ ຂອງ ໝາກຜົນ ທີ່ໄດ້ຮັບ ຈາກການຄົ້ນຄ້ວາ ແລະ ການເຄື່ອນໄຫວຕ່າງໆຂອງຕົນ;

ຊ) ສະເຫນີຕໍ່ສະພາບໍລິຫານ ກ່ຽວກັບ ການອອກ ຂໍ້ຕົກລົງການກຳນົດມູນຄ່າໝາກຜົນ ທີ່ໄດ້ຮັບ ຈາກ ການຮ່ວມມືກັບບັນດາບຸກຄົນທີ່ສາມ;

ຍ) ຕົກລົງບັນຫາກ່ຽວກັບ:

- ການໄດ້ມາ ແລະ ການຂາຍຊັບສິນ, ສິ່ງປຸກສ້າງ ແລະ ເຄື່ອງປະກອບໃນມູນຄ່າ ຕ່ຳກວ່າ 50,000 ເອີໂຣ (ຫ້າສິບພັນ ເອີໂຣ);
- ເຊັນສັນຍາກູ້ຢືມເງິນ ໃນມູນຄ່າຕ່ຳກວ່າ 50, 000 ເອີໂຣ (ຫ້າສິບພັນ ເອີໂຣ );

ດ) ປະຕິບັດທຸກວຽກງານ ຕາມ ຄຳຂໍຮ້ອງຂອງ ສະພາບໍລິຫານ ເພື່ອຜົນປະໂຫຍດຂອງ ສະຖາບັນ ປັດສະເຕີ ລາວ.

ໃນກໍລະນີ ທີ່ ຜູ້ອຳນວຍການໃຫຍ່ ຄາວຽກ ຫຼື ຂາດ, ຜູ້ກ່ຽວ ສາມາດ ມອບສິດ ອຳນາດ ຂອງ ຕົນ ໃຫ້ແກ່ ພະນັກງານຄົນອື່ນທີ່ເໝາະສົມ ຂອງ ສະຖາບັນ ປັດສະເຕີ ລາວ ແຕ່ ຕ້ອງໄດ້ຮັບ ຄວາມເຫັນດີລ່ວງໜ້າ ຈາກ ສະພາບໍລິຫານ.

## ພາກທີ 6. ສະພາວິທະຍາສາດ

### ມາດຕາ 23: ອົງປະກອບ

1. ເລີ່ມແຕ່ມື້ສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ ເປັນຕົ້ນໄປ, ສະພາວິທະຍາສາດ ປະກອບ ດ້ວຍສະມາຊິກ ສາມ (3) ທ່ານ ແຕ່ງຕັ້ງ ໂດຍສະພາບໍລິຫານ ໃນ ບັນດານັກວິທະຍາ ສາດທີ່ມີຊື່ສຽງລະດັບສາກົນ ແລະ ມີຄວາມຮູ້ຢ່າງເລິກເຊິ່ງ ກ່ຽວກັບສະພາບການ ດ້ານ ສາທາລະນະສຸກໃນລາວ.
2. ຈຳນວນສະມາຊິກ ສາມາດພິຈາລະນາຄືນໃຫມ່ໄດ້ ຕາມ ມະຕິຕົກລົງ ຂອງ ສະພາບໍລິ ຫານ.

### ມາດຕາ 24: ສິດ ແລະ ໜ້າທີ່

1. ສະພາວິທະຍາສາດ ໃຫ້ຄຳແນະນຳແກ່ ຜູ້ອຳນວຍການໃຫຍ່ ແລະ ສະພາບໍລິຫານ ໃນ ການກຳນົດຍຸດທະສາດ ວິທະຍາສາດ ແລະ ແຜນການຄົ້ນຄວ້າ ກໍ່ຄືການແນະນຳ ກ່ຽວ ກັບການຕີລາຄາຜົນສຳເລັດໂຄງການຄົ້ນຄວ້າ ດຳເນີນໂດຍ ສະຖາບັນ ປັດສະເຕີ ລາວ. ດ້ວຍເຫດນັ້ນ, ສະພາວິທະຍາສາດ ຈຶ່ງຕ້ອງປະຊຸມກັນ ຕາມຫົວຄິດລິເລີ່ມຂອງຜູ້ອຳນວຍ ການໃຫ່ຍ ທຸກເທື່ອທີ່ເຫັນວ່າມີຄວາມຈຳເປັນແລະຢ່າງຫນ້ອຍ ຫນຶ່ງເທື່ອຕໍ່ປີ.
2. ສະພາວິທະຍາສາດ ເຮັດລາຍງານຢ່າງສະຫມ່ຳສະເຫມີ ຊຶ່ງປະກອບດ້ວຍຂໍ້ມູນສຳຄັນ ກ່ຽວກັບການຕີລາຄາໂຄງການວິທະຍາສາດ ແລະ ຜົນສຳເລັດ ແລ້ວສົ່ງລາຍງານໃຫ້ ຜູ້ອຳນວຍການໃຫ່ຍ ທີ່ຈະສົ່ງໃຫ້ສະພາບໍລິຫານຕໍ່ໄປ.

## ພາກທີ 7. ພະນັກງານ

### ມາດຕາ 25: ພະນັກງານພາຍໃນ

ພະນັກງານພາຍໃນທີ່ເຮັດວຽກນຳ ສະຖາບັນ ປັດສະເຕີ ລາວ ຕ້ອງຢູ່ພາຍໃຕ້ ລະບອບ ລວມ ຂອງ ກົດຫມາຍແຮງງານ ຂອງ ສປປ ລາວ.

### ມາດຕາ 26: ພະນັກງານຕ່າງປະເທດ

1. ສະຖາບັນ ປັດສະເຕີ ລາວ ຈະໃຊ້ຊ່ຽວຊານຕ່າງປະເທດ ທີ່ຈຳເປັນໃນການພັດທະນາ ການເຄື່ອນ ໄຫວຂອງສະຖາບັນ ຈົນກວ່າ ຊ່ຽວຊານພາຍໃນ ສາມາດປ່ຽນແທນໄດ້.

2. ພະນັກງານ ຕ່າງປະເທດ ຕ້ອງໄດ້ຮັບການປະຕິບັດ ລະບອບພິເສດ ທີ່ໄດ້ກຳນົດໄວ້ເປັນ ແຕ່ລະກໍລະນີ ໃນສັນຍາຈ້າງແຮງງານທີ່ກ່ຽວຂ້ອງ.

## ໝວດທີ IV
## ລະບອບຊັບສິນ ແລະ ການເງິນ

### ພາກທີ 1. ຊັບສິນ

#### ມາດຕາ 27: ປະເພດ ແລະ ສ່ວນປະກອບ

1. ສະຖາບັນ ປັດສະເຕີ ລາວ ມີ ຊັບສິນເປັນຂອງຕົນເອງ.
2. ຊັບສິນ ຂອງ ສະຖາບັນ ປັດສະເຕີ ລາວ ປະກອບມີ ດັ່ງນີ້:
   ກ) ສິດໃຊ້ ທີ່ດິນ ທີ່ ສະຖາບັນ ປັດສະເຕີ ລາວ ຈະປຸກສ້າງຂຶ້ນ, ເຊິ່ງ ມີ ເນື້ອທີ່ ປະມານ 9.250 ຕາແມັດ ແລະ ຕັ້ງຢູ່ ເຂດເມືອງ ສີສັດຕະນາກ. ສິດນຳໃຊ້ເຫຼົ່ານີ້ ໄດ້ຮັບການໂອນ ໃຫ້ລ້າ ໂດຍ ກະຊວງ ສາທາລະນະສຸກ, ດ້ວຍ ການຕົກລົງເຫັນດີ ຂອງ ອົງການ ທີ່ມີສິດອຳນາດ ດ້ານທີ່ດິນ.
   ຂ) ອະສັງຫາຣິມະຊັບ ທີ່ ຖືກສ້າງ ຫຼື ຈະຖືກສ້າງ ໃນ ທີ່ດິນ ເຊິ່ງ ສິດນຳໃຊ້ ໄດ້ຖືກໂອນໃຫ້ແກ່ ສະຖາບັນ ປັດສະເຕີ ລາວ. ອະສັງຫາລິມະຊັບ ເຫຼົ່ານີ້ ເປັນ ກຳມະສິດ ອັນເຕັມສ່ວນ ຂອງ ສະຖາບັນ ປັດສະເຕີ ລາວ;
   ຄ) ບັນດາສັງຫາຣິມະຊັບ ປະກອບດ້ວຍ ວັດຖຸ ແລະ ເຄື່ອງປະກອບ ເພື່ອຮັບໃຊ້ ຄວາມຕ້ອງການ ໃນການເຄື່ອນໄຫວຂອງ ສະຖາບັນ ປັດສະເຕີລາວ ; ແລະ
   ງ) ສິດໃນຊັບສິນທາງປັນຍາ ດັ່ງທີ່ນິຍາມໄວ້ໃນ ມາດຕາ 28.

#### ມາດຕາ 28: ສິດໃນຊັບສິນທາງປັນຍາ

1. ສະຖາບັນ ປັດສະເຕີ ລາວ ສາມາດເປັນເຈົ້າກຳມະສິດພຽງຜູ້ດຽວ ກ່ຽວກັບ ສິດ ໃນຊັບສິນທາງປັນຍາ ເຊິ່ງໄດ້ມາຈາກການຄົ້ນຄ້ວາ ໂດຍກົງ, ເວັ້ນເສຍແຕ່:
   - ມີພັນທະກໍລະນີ ຕົກລົງກັນໄວ້ແລ້ວ ຫລື ຂອບກົດໝາຍ ໃຫ້ຜົນປະໂຫຍດ ແກ່ ບຸກຄົນທີສາມ ແລະ ໃນກໍລະນີທີ່ ສະຖາບັນ ປັດສະເຕີ ລາວ ຫລື ກະຊວງ ສາທາລະນະສຸກ ຫາກໂອນສິດທີດັ່ງກ່າວ ໃຫ້ແກ່ບຸກຄົນທີ່ສາມ ໃນຂອບເຂດ ຂອງໂຄງການຄົ້ນຄວ້າ; ແລະ
   - ບັນດາສິດທີທີ່ມີກ່ອນ ຂອງ ສະຖາບັນ ປັດສະເຕີ ແລະ ສິດທີທີ່ກ່ຽວພັນນຳ.
2. ສະຖາບັນ ປັດສະເຕີລາວສາມາດເປັນເຈົ້າກຳມະສິດຮ່ວມ ກັບ ສະຖາບັນ ປັດສະເຕີ ກ່ຽວກັບ ສິດ ໃນ ຊັບສິນທາງປັນຍາ ອັນໄດ້ຮັບຜົນມາຈາກການປະກອບ ສ່ວນ ໃນໂຄງການຄົ້ນຄວ້າຮ່ວມກັນ. ສິດທີເປັນເຈົ້າກຳມະສິດຮ່ວມ ນີ້ ຕ້ອງໄດ້ຄຳນຶງເຊັ່ນກັນເຖິງ:

- ບັນດາສິດໃນຊັບສິນທາງປັນຍາທີ່ມີກ່ອນແລ້ວ ຂອງສະຖາບັນປັດສະເຕີ ຫລື ສະຖາບັນ ປັດສະເຕີລາວ; ຫລື
- ສິດທີ່ກ່ຽວກັບວັດຖຸຊີວະພາບ ຈາກ ສະຖາບັນ ປັດສະເຕີ ຫລື ສະຖາບັນ ປັດສະເຕີ ລາວ.

ທັງຫມົດຜົນງານຄົ້ນຄ້ວາຮ່ວມກັນ ຕ້ອງເຮັດສັນຍາສະເພາະ ກ່ຽວກັບການ ຮ່ວມ ມືຄົ້ນຄ້ວານຳກັນ ເຊິ່ງໃນນັ້ນຕ້ອງບົ່ງແຈ້ງ ເຖິງພູດສ່ວນກຳມະສິດ ຂອງແຕ່ລະສະຖາບັນ.

3. ເວັ້ນເສຍແຕ່ໃນກໍລະນີທີ່ ສະຖາບັນ ປັດສະເຕີ ແລະ ສະຖາບັນ ປັດສະເຕີ ລາວ ຫາກຄັດຄ້ານ, ສະຖາບັນ ປັດສະເຕີ ລາວ ສາມາດມອບສິດນຳໃຊ້ຊັບສິນທາງປັນຍາ ເຊິ່ງແມ່ນກຳມະສິດຮ່ວມ ລະຫວ່າງ ສະຖາບັນ ປັດສະເຕີ ກັບ ສະຖາບັນ ປັດສະເຕີ ລາວ ເຊິ່ງໄດ້ມາຈາກໂຄງການຄົ້ນຄ້ວານັ້ນ ໃຫ້ແກ່ບັນດາສະຖາບັນໃນເຄືອຂ່າຍສາກົນ ຂອງ ສະຖາບັນ ປັດສະເຕີ ໂດຍມີສັນຍາ ແລະ ເພື່ອຈຸດປະສົງ ຄົ້ນຄ້ວາເທົ່ານັ້ນ.
4. ເພື່ອ ສາມາດຕິດຕາມ ການເຄື່ອນຍ້າຍ ວັດຖຸຊີວະສາດ, ທຸກການສົ່ງການຮັບ ວັດຖຸຊີວະສາດ ຈາກ ສະຖາບັນ ປັດສະເຕີ ລາວ ແລະ ມາໃຫ້ ສະຖາບັນ ປັດສະເຕີ ລາວ ນັ້ນ ຕ້ອງມີສັນຍາສົ່ງໂອນວັດຖຸດັ່ງກ່າວ ເຊິ່ງ ຕ້ອງບົ່ງແຈ້ງໂດຍສະເພາະເຖິງວິທີການ ນຳໃຊ້ວັດຖຸທີ່ກ່ຽວຂ້ອງ.

## ພາກທີ 29. ງົບປະມານ

### ມາດຕາ 2: ການຮອງຮັບ ແລະ ຄຸ້ມຄອງງົບປະມານ

1. ແຜນງົບປະມານເບື້ອງຕົ້ນ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນ ກະຊວງ ສາທາລະນະສຸກ ແລະ ສະຖາບັນ ປັດສະເຕີ ເປັນຜູ້ຮ່າງອອກ.
2. ງົບປະມານເບື້ອງຕົ້ນນີ້ປະກອບດ້ວຍຄ່າໃຊ້ຈ່າຍ ການດຳເນີນວຽກງານ ແລະ ບ້ວງລົງທຶນ ສຳລັບ ຫ້າ (5) ປີ ທຳອິດ ຂອງ ການເຄື່ອນໄຫວວຽກງານ.
3. ງົບປະມານຂອງ ສະຖາບັນ ປັດສະເຕີ ລາວ ຈັດວາງເປັນໄລຍະ ຫນຶ່ງປີ ຄືນັບແຕ່ ວັນທີ 1 ມັງກອນ ເຖິງວັນທີ 31 ທັນວາ.

### ມາດຕາ 30: ຊັບພະຍາກອນ

1. ຊັບພະຍາກອນຂອງ ສະຖາບັນ ປັດສະເຕີລາວ ປະກອບດ້ວຍ :
   ກ) ເງິນບຳລຸງ, ເງິນບໍລິຈາກ ແລະ ມໍລະດົກທີ່ໄດ້ມາຈາກ ຈາກ ບັນດາຜູ້ບໍລິຈາກ;
   ຂ) ການກູ້ຢືມທີ່ ສະຖາບັນ ປັດສະເຕີ ລາວ ເຊັນໃນນາມຂອງຕົນເອງ ໃນກໍລະນີທີ່ຈຳເປັນ;
   ຄ) ລາຍຮັບຈາກສັງຫາລິມະຊັບ ແລະ ອະສັງຫາລິມະຊັບ;

ງ) ລາຍຮັບໄດ້ຈາກການເຄື່ອນໄຫວ ບໍລິການຂອງຕືນ ແລະ ໂດຍສະເພາະ ຈາກລາຍຮັບອັນເກີດຈາກ ສິດ ໃນຊັບສິນທາງປັນຍາທີ່ຕືນມີຢູ່ ເພື່ອພັດທະ ນາການເຄື່ອນໄຫວຂອງການຄົ້ນຄ້ວາ;

ຈ) ລາຍຮັບອື່ນໆ ທີ່ໄດ້ມາຈາກການເຄື່ອນໄຫວກິດຈະກຳຂອງຕືນ ໂດຍມີເງື່ອນໄຂວ່າ ລາຍຮັບເຫລົ່ານີ້ຕ້ອງນຳໄປໃຊ້ຄືນໃໝ່ ເພື່ອຜົນປະໂຫຍດ ຂອງ ກິດຈະກຳຂອງ ສະຖາບັນ ປັດສະເຕີ ລາວ.

2. ສະຖາບັນ ປັດສະເຕີ ລາວ ຕ້ອງຈັດຕັ້ງການຂໍທືນ ໂດຍສະເພາະນຳບັນດາ ຜູ້ບໍລິກຈາກ ແລະ ດຳເນີນການໃຫ້ພວກເພິ່ນຮັບຮູ້ວ່າ ຕືນໄດ້ເອົາໃຈໃສ່ ຕິດຕາມການເຄົາລົບ ຕໍ່ເປົ້າໝາຍ ແລະ ການເຄື່ອນໄຫວຢ່າງກ້ວາງຂວາງ ຂອງ ສະຖາບັນ ປັດສະເຕີ ລາວ.

**ມາດຕາ 31: ການນຳໃຊ້ຊັບພະຍາກອນ**

ບັນດາຊັບພະຍາກອນ ຂອງ ສະຖາບັນ ປັດສະເຕີ ລາວ ນຳໄປໃຊ້ຈ່າຍ ໂດຍສອດຄ່ອງກັບ ຫລັກການ ດັ່ງຕໍ່ໄປນີ້:

ກ) ເຮັດແຜນການລະອຽດ ກ່ຽວກັບການນຳໃຊ້ກອງທືນ ໃຫ້ສອດຄ່ອງກັບ ພາລະບົດບາດ ຂອງ ສະຖາບັນ ປັດສະເຕີ ລາວ ແລະ ແຈ້ງໃຫ້ຜູ້ບໍລິຈາກທັງໝົດ ຮັບຊາບນຳ;

ຂ) ຄວນຈ່າຍໃຫ້ມີປະສິດທິຜົນ ສອດຄ່ອງກັບຄຳປະກາດ ແລະ/ຫຼື ຂໍ້ຕົກລົງ ກັບ ຜູ້ບໍລິຈາກ.

## ພາກທີ 3. ລະບອບອາກອນ

**ມາດຕາ 32: ຫລັກການຍົກເວັ້ນ**

ສະຖາບັນ ປັດສະເຕີ ລາວ, ຜູ້ບໍລິຈາກ ຂອງ ສະຖາບັນດັ່ງກ່າວ ລວມທັງ ສະຖາບັນ ປັດສະເຕີ, ແລະ ບຸກຄະລາກອນ ຕ່າງປະເທດ ຂອງ ສະຖາບັນດັ່ງກ່າວ ຈະໄດ້ຮັບ ການຍົກເວັ້ນ ພາສີອາກອນທີ່ ອະນຸຍາດ ໂດຍ ກົດໝາຍ ຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 4 ຂອງ ຂໍ້ຕົກລົງ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ.

# ໝວດທີ V
# ການບັນຊີ ແລະ ການກວດສອບບັນຊີ

**ມາດຕາ 33: ບັນດາຫລັກການ**

1. ສະຖາບັນ ປັດສະເຕີ ລາວ ມີການບັນຊີຢ່າງສະໜ່ຳສະເໝີ ແລະ ໂປ່ງໃສໃນທຸກການໃຊ້ຈ່າຍ ຕາມມາດຕະຖານການບັນຊີ ທີ່ມີຜົນບັງຄັບໃຊ້ ໃນລາວ ແລະ ຕາມ ຫລັກການບັນຊີທົ່ວໄປ ປີການບັນຊີເລີ່ມຕົ້ນ ແຕ່ວັນທີ 1 ມັງກອນ ແລະ ປິດລົງໃນວັນທີ 31 ທັນ ວາ ຂອງທຸກໆປີ.
2. ຜູ້ອຳນວຍການໃຫຍ່ຕ້ອງສົ່ງບົດລາຍງານການເງິນປະຈຳປີ ໃຫ້ ສະພາບໍລິຫານ.
3. ຜູ້ກວດສອບບັນຊີຄົນນອກ ທີ່ສະພາບໍລິຫານເປັນຜູ້ແຕ່ງຕັ້ງນັ້ນ ຈະເຮັດລາຍ ງານປະຈຳປີ ຢັ້ງຢືນຄວາມຖືກຕ້ອງຂອງບັນຊີປະຈຳປີ ແລະ ສະເໜີຮັບຮອງ ຈາກ ສະພາບໍລິຫານ ໃນທຸກໆປີ. ສົ່ງລາຍງານດັ່ງກ່າວ ໃຫ້ທຸກພາກ ສ່ວນທີ່ກ່ຽວຂ້ອງ, ແລະ ໂດຍສະເພາະໃຫ້ ສະຖາບັນ ປັດສະເຕີ, ໃຫ້ກະຊວງສາທາລະນະສຸກ ແລະ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຂອງຝ່າຍລາວ.

## ມາດຕາ 34: ໜີ້ສິນ ແລະ ພັນທະ

ສະຖາບັນ ປັດສະເຕີ ລາວ ຕ້ອງຊຳລະໜີ້ສິນ ແລະພັນທະ ດ້ວຍຊັບພະຍາກອນ ຂອງຕົນເອງ ເຊິ່ງບໍ່ມີການກະທົບກະເທືອນໃດໆ. ບໍ່ມີຜູ້ບໍລິຫານຄົນໃດ ຫລື ສະມາຊິກສະພາວິທະຍາສາດຄົນໃດ ຫຼື ສະມາຊິກພະນັກງານ ກໍ່ຄື ລັດຖະບານ ຫລື ສະຖາບັນທີ່ໃຊ້ ງານ ບັນດາບຸກຄົນທີ່ກ່າວມາໃນຂ້າງເທິງນີ້ຈະໄດ້ຮັບຜິດຊອບ ດ້ວຍຕົນເອງ ຫລື ດ້ວຍວິທີການອື່ນໃດ ຕໍ່ ໜີ້ສິນ ຂອງ ສະຖາບັນ ປັດສະເຕີ ລາວ.

## ມາດຕາ 35: ຜູ້ກວດສອບບັນຊີຈາກພາຍນອກ

ກະຊວງ ສາທາລະນະສຸກ, ໂດຍຄວາມຄິດລິເລີ່ມຂອງຕົນເອງ ຫລື ຕາມຄຳຮ້ອງຂໍຂອງສະຖາບັນ ປັດສະເຕີ ນັ້ນສາມາດເຊື້ອເຊີນຊ່ຽວການບັນຊີຫລືຜູ້ກວດສອບ ບັນຊີຈາກພາຍນອກ ມາກວດກາການເງິນ ໂດຍອີງຕາມການ ຮ້ອງຂໍອັນສົມເຫດສົມ ຜົນຂອງຕົນ ແລະ ມີເງື່ອນໄຂທີ່ວ່າ ການກວດກາດັ່ງກ່າວນັ້ນ ບໍ່ໄປລົບກວນການເຄື່ອນໄຫວວຽກງານ ປະຈຳວັນ ຂອງ ສະຖາບັນ ປັດສະເຕີ ລາວ. ໃນກໍລະນີມີການກວດກາທີ່ອາດຈະມີຂຶ້ນນັ້ນ, ຄ່າໃຊ້ ຈ່າຍທັງໝົດຕົກເປັນພາລະຂອງ ບຸກຄົນຜູ້ອອກຫົວຄິດກວດກາ ເປັນຜູ້ຮັບຜິດຊອບ ສະຖາບັນ ປັດສະເຕີ ລາວ ໃຫ້ຄວາມຮ່ວມມືຢ່າງເຕັມສ່ວນ ຕໍ່ນັກບັນຊີ ທີ່ຖືກແຕ່ງຕັ້ງເຊິ່ງສາມາດ ກວດສອບປື້ມບັນຊີ ແລະ ບັນຊີທະນາຄານ ຂອງ ສະຖາບັນ ປັດສະເຕີ ລາວ ທັງໝົດ.

ຮັບຮອງ ເອົາ ໂດຍ ສະພາບໍລິຫານ ຂອງ ສະຖາບັນ ປັດສະເຕີ ລາວ ເມື່ອ ວັນທີ່............

ປະທານ ສະພາບໍລິຫານ